

# ອາໄສຢູ່ໃນແຜ່ນດິນ

ບົດຮຽນທີ 11 ສຳລັບສະບາໂຕທີ 13 ເດືອນ 12 2025








“ຄຳຕອບອັນອ່ອນຫວານລະງັບຄວາມໂກດ
ໄວ້, ແຕ່ຄຳເວົ້າຫຍາບຊ້າຍົວະໃຫ້ໂມໂຫ”
(ສພສ 15:1)

ຫລັງຈາກສົງຄາມຫລາຍປີຜ່ານມາ, ອິດສະຣາເອນໄດ້ຊະນະຄານາອານ, ເຖິງວ່າປະຊາຊົນບາງສ່ວນທີ່ເປັນສັດຕູນັ້ນຍັງຄົງເຫລືອຢູ່ໃນດິນແດນກໍ່ຕາມ.

ສອງຊົນເຜົ່າເຄິ່ງ ທີ່ໄດ້ຍຶດຄອງເອົາດິນແດນຢູ່ທາງຕາເວັນອອກ (ເຜົ່າຣູເບັນ, ເຜົ່າກາດ ແລະ ເຜົ່າມານາເຊ ເຄິ່ງເຜົ່າ), ໄດ້ຂ້າມແມ່ນ້ຳຈໍແດນມາຊ່ວຍຍຶດຄອງເອົາດິນແດນ ເພື່ອເຮັດຕາມສັນຍາຂອງຕົນເອງຢ່າງສັດຊື່

ໃນທີ່ສຸດ, ເວລາແຫ່ງການຈາກລາກໍ່ມາຮອດ. ຫລັງຈາກອວຍພອນ ແລະ ແນະນຳພວກເຂົາໃຫ້ດຳເນີນຕາມທາງຂອງພຣະເຈົ້າ, ໂຢຊວຍຈຶ່ງອຳລາພວກເຂົາໄປ. ແຕ່ການຈາກລານັ້ນ ຖືກປິດບັງດ້ວຍຄວາມເຂົ້າໃຈຜິດ ເຊິ່ງອາດຈະທຳລາຍຄວາມສາມັກຄີຂອງຊາວອິດສະຣາເອນໄດ້.





- ຄຳເວົ້າໃນການສັ່ງລາ (ຢຊ 22:1-8)
- ເຫດຜົນຂອງຄວາມຂັດແຍ້ງ (ຢຊ 22:10-12)
- ຂໍ້ກ່າວຫາ (ຢຊ 22:13-20)
- ຄຳຕອບທີ່ມີເມດຕາ (ຢຊ 22:21-29)
- ການຄືນດີ (ຢຊ 22:30-34)

# ຄຳເວົ້າໃນການສັ່ງລາ

“ຈົ່ງໃຫ້ແນ່ໃຈວ່າພວກເຈົ້າເຊື່ອຟັງກົດບັນຍັດທີ່ໂມເຊຜູ້ຮັບໃຊ້ຂອງພຣະເຈົ້າຢາເວໄດ້ສັ່ງໄວ້ກັບພວກເຈົ້າຄື: ຈົ່ງຮັກພຣະເຈົ້າຢາເວ ພຣະເຈົ້າຂອງພວກເຈົ້າ, ຈົ່ງປະຕິບັດຕາມຄວາມປະສົງຂອງພຣະອົງ, ຈົ່ງເຊື່ອຟັງຂໍ້ຄຳສັ່ງຂອງພຣະອົງ, ຈົ່ງຊື່ສັດຕໍ່ພຣະອົງ ແລະ ຈົ່ງບົວລະບັດຮັບໃຊ້ພຣະອົງດ້ວຍສຸດໃຈ ແລະ ດ້ວຍສຸດຈິດ.”(ຢຊ 22:5 NIV)

ເນື່ອງຈາກແມ່ນ້ຳຈຳແດນເປັນເສັ້ນແບ່ງແຍກລະຫວ່າງເຜົ່າຕ່າງໆ, ໂຢຊວຍຈຶ່ງໄດ້ໃຫ້ຄຳແນະນຳທີ່ສະຫລາດໃຫ້ແກ່ເຜົ່າທັງສອງ ແລະ ເຄິ່ງເຜົ່າ. ເພື່ອໃຫ້ພວກເຂົາຍັງຄົງຊື່ສັດຕໍ່ໄປໄດ້ (ຢຊ 22:5):

| | |
|---|---|
| ຈົ່ງຮັກພຣະເຈົ້າຂອງພວກເຈົ້າ | ຄວາມຮັກແມ່ນຫລັກການທີ່ນຳພວກເຮົາໄປສູ່ພຣະເຈົ້າ. ເຮົາຮັກພຣະອົງຍ້ອນພຣະອົງຊົງຮັກພວກເຮົາກ່ອນ (1 ຢຮ 4:19) |
| ຈົ່ງຍ່າງໄປດ້ວຍຄວາມເຊື່ອກັບພຣະອົງ | ນີ້ແມ່ນວິທີທີ່ໂຢຊວຍໄດ້ສະແດງໃຫ້ເຫັນເຖິງສິ່ງທີ່ຄາດຫວັງຈາກຜູ້ທີ່ເລືອກເດີນກັບພຣະເຈົ້າ |
| ຈົ່ງຮັກສາພຣະບັນຍັດຂອງພຣະອົງ | ການເຊື່ອຟັງແມ່ນຜົນຂອງຫົວໃຈທີ່ສຳນຶກໃນພຣະຄຸນທີ່ເຂົ້າໃຈໃນສິ່ງທີ່ພຣະເຈົ້າຊົງໄດ້ກະທຳ |
| ຈົ່ງຍຶດໝັ້ນໃນພຣະອົງ | ພວກເຮົາຕ້ອງຍຶດໝັ້ນໃນພຣະເຈົ້າ ໂດຍບໍ່ຕ້ອງປ່ອຍໃຫ້ສິ່ງລົບກວນໃດໆມາທຳລາຍພັນທະສັນຍານັ້ນ |
| ຈົ່ງຮັບໃຊ້ພຣະອົງດ້ວຍສຸດຫົວໃຈ ແລະ ຈິດວິນຍານ | ພວກເຮົາຈະໄດ້ພົບກັບຈຸດມຸ້ງໝາຍທີ່ແທ້ຈິງ, ຄວາມເພິ່ງພໍໃຈ, ແລະ ຊີວິດທີ່ອຸດົມສົມບູນ ຕອນທີ່ພວກເຮົາເຕັມໃຈຮັບໃຊ້ພຣະຜູ້ສ້າງດ້ວຍຄວາມຮັກ |



# ເຫດຜົນແຫ່ງຄວາມຂັດແຍ້ງ

“ເມື່ອເຜົ່າຣູເບັນ, ເຜົ່າກາດ ແລະ ເຜົ່າມານາເຊຕາເວັນອອກໄດ້ມາຮອດເມືອງເກລີໂລດ ທີ່ຍັງຢູ່ທາງຝາກຕາເວັນຕົກຂອງແມ່ນ້ຳຈໍແດນນັ້ນ. ພວກເຂົາກໍ່ໄດ້ສ້າງແທ່ນບູຊາອັນໃຫຍ່ທີ່ເປັນນ້າປະທັບໃຈໄວ້ຢູ່ໃກ້ກັບແມ່ນ້ຳນັ້ນ” (ຢຊ 22:10)



ໃກ້ກັບສະຖານທີ່ໂຢຊວຍໄດ້ສ້າງອະນຸສະຖານແຫ່ງການຂ້າມແມ່ນ້ຳຈໍແດນຢ່າງອັດສະຈັນ ສອງເຜົ່າເຄິ່ງໄດ້ສ້າງແທ່ນບູຊາທີ່ຄ້າຍກັບແທ່ນບູຊາຂອງສະຖານສັກສິດ (ຫໍເຕັນ), (ຢຊ. 22:10, 28).



ການເຮັດແບບນີ້ຖືກຕີຄວາມວ່າ ເປັນການລະເມີດກົດທີ່ຫ້າມການຖວາຍເຄື່ອງບູຊາໃນສະຖານທີ່ອື່ນ ນອກຈາກແທ່ນບູຊາທີ່ເຜົາໃນສະຖານສັກສິດ (ຫໍເຕັນ) (ລບລວ. 17:8-9).



ຊາວອິດສະຣາເອນທີ່ເຫລືອໄດ້ຕັດສິນໃຈຊຸມນຸມກັນ ແລະ ພາກັນໄປທີ່ເມືອງຊີໂລ ເພື່ອເຮັດເສິກກັບບັນດາເຜົ່າທາງທິດຕາເວັນອອກ (ຢຊ. 22:12). ແຕ່ພຣະເຈົ້າໄດ້ເຂົ້າມາແຊກແຊງ ເພື່ອບໍ່ໃຫ້ເກີດສົງຄາມກາງເມືອງແບບນອງເລືອດ. ພຣະອົງຍົງຍົກຍ້ອງຜູ້ຄົນທີ່ເລືອກທີ່ຈະບໍ່ຕັດສິນຄົນອື່ນໂດຍບໍ່ມີຫລັກຖານ; ຜູ້ຄົນທີ່ໃຫ້ໂອກາດພີ່ນ້ອງໄດ້ອະທິບາຍຕົນເອງ, ແລະ ຊີ້ແຈງຂໍ້ສົງໄສຕ່າງໆ (ຢຊ. 22:13-14).

ແຕ່ຄວາມຜິດພາດຂອງພວກເຂົາຢ່າງດຽວກໍ່ຄື: ການທີ່ບໍ່ແຈ້ງໃຫ້ພີ່ນ້ອງຮູ້ເຖິງເຈດຕະນາຂອງພວກເຂົາ.. ແຕ່ວ່າສິ່ງນັ້ນບໍ່ແມ່ນຄວາມບາບ.

# ຂໍ້ກ່າວຫາ

"ພວກເຂົາເວົ້າວ່າ: ເປັນຫຍັງພວກເຈົ້າຈຶ່ງເຮັດຊົ່ວຢ່າງຮ້າຍແຮງນີ້ຕໍ່ສູ້ພຣະເຈົ້າຂອງຊາດອິດສະຣາເອນ ໃນວັນນີ້ໄດ້ຫັນໜີຈາກພຣະເຈົ້າຢາເວ ໂດຍໄດ້ສ້າງແທ່ນບູຊາສຳລັບຕົນເອງຂຶ້ນ ເຊິ່ງເປັນການຕໍ່ສູ້ກະບົດຕໍ່ພຣະເຈົ້າຢາເວ ພວກເຈົ້າບໍ່ໄດ້ຕິດຕາມພຣະອົງຕໍ່ໄປແລ້ວ?' "

(ຢຊ 22:16)



ເປັນຫຍັງ ຟີເນຣາ ຈຶ່ງໄດ້ຮັບເລືອກໃຫ້ເປັນເຈົ້າຄະນະຂອງການສືບສວນ?
(ຢຊ. 22:13-14)?

ຟີເນຮາ, ລູກຊາຍຂອງປະໂລຫິດ, ໄດ້ພະຍາຍາມຢ່າງບໍ່ທໍ້ຖອຍໃນການຢຸດຄວາມບາບທີ່ເມືອງເປອໍ(ຈຊບຊ. 25:7-8). ໃນຄຳເວົ້າຂອງຟີເນຮາ, ລາວໄດ້ເຊື່ອມໂຍງຄວາມບາບນີ້ກັບຄວາມບາບຂອງ ທ.ອາການ ແລະ ໄດ້ປຽບທຽບກັບຄວາມບາບທີ່ຄິດວ່າເກີດຈາກສອງເຜົ່າເຄິ່ງນັ້ນ (ຢຊ. 22:16-20).



ຄຳເວົ້າຂອງຟີເນຮາເປັນສິ່ງທີ່ສົມເຫດສົມຜົນທີ່ສຸດ. ຖ້າວ່າມີການຖວາຍເຄື່ອງບູຊາທີ່ແທ່ນບູຊາທີ່ສ້າງຂຶ້ນໃໝ່ ພຣະເຈົ້າອາດຈະຊົງລົງໂທດອິດສະຣາເອນທັງໝົດ (ຢຊ.22:18).

ຢ່າງໃດກໍ່ຕາມ, ພຣະອົງຍັງຊົງໄດ້ໃຫ້ໂອກາດພວກເຂົາໄດ້ແກ້ໄຂຄວາມຜິດພາດນີ້, ກ່ອນທີ່ພວກເຂົາຈະເຮັດບາບ: ໂດຍຊົງໃຫ້ພວກເຮົາກັບໄປທີ່ຝັ່ງແມ່ນ້ຳຈໍແດນ ເຊິ່ງເປັນທີ່ຕັ້ງຂອງບ່ອນນະມັດສະການ (ຢຊ. 22:19).



# ຄຳຕອບທີ່ມີຄວາມເມດຕາ

"ຖ້າພວກຂ້ອຍບໍ່ເຊື່ອຟັງພຣະເຈົ້າຢາເວໂດຍສ້າງແທ່ນບູຊາຂຶ້ນເປັນຂອງສ່ວນຕົວ ເພື່ອເຜົາຖວາຍເຄື່ອງບູຊາ ຫລືເພື່ອຖວາຍບູຊາພືດຜົນເປັນເມັດ ຫລືຖວາຍເພື່ອຄວາມສາມັກຄີທຳ ຖ້າພວກຂ້ອຍໄດ້ເຮັດເຊັ່ນນັ້ນ ຂໍໃຫ້ພຣະເຈົ້າຢາເວ ເປັນຜູ້ລົງໂທດພວກຂ້ອຍ." (ຢຊ 22:23)

ເມື່ອຖືກກ່າວຫາ ເຜົ່າຣູເບັນ, ເຜົ່າກາດ ແລະ ເຜົ່າມານາເຊກໍໄດ້ປະພຶດຕົນເປັນແບບຢ່າງທີ່ດີໂດຍ:



- ພວກເຂົາຮັບຟັງຂໍ້ກ່າວຫາຢ່າງມິດງຽບ
- ພວກເຂົາເອີ້ນຫາພຣະເຈົ້າມາເປັນພະຍານ
- ພວກເຂົາຍອມຮັບການລົງໂທດຖ້າວ່າເຮັດຄວາມບາບ
- ພວກເຂົາເປີດເຜີຍເຈດຕະນາທີ່ແທ້ຈິງຂອງຕົນເອງ

ເມື່ອຊາວອິດສະຣາເອນບໍ່ຮູ້ຈັກແຮງຈູງໃຈຂອງພີ່ນ້ອງໃນການສ້າງແທ່ນບູຊາ ພວກເຂົາກໍ່ຄິດວ່າມັນຄື: ການກະບົດ, ຄວາມປາຖະໜາທີ່ຈະແຕກແຍກ, ແລະ ການລົງໂທດຈາກພຣະເຈົ້າ.

ຄວາມຈິງກໍ່ຄື: ຄວາມປາຖະໜາທີ່ຈະຢູ່ຮ່ວມກັບພີ່ນ້ອງຂອງຕົນເອງ ແລະ ຫລີກລ້ຽງການທີ່ຈະແຍກໂຕອອກໄປໃນອະນາຄົດຂອງຊາວອິດສະຣາເອນ (ຢຊ. 22:24-26).

ເຖິງວ່າເຜົ່າທີ່ຖືກກ່າວຫານັ້ນອາດຈະຮູ້ສຶກຂຸ່ນເຄືອງໃຈ ແລະ ຂໍ້ຕອບໂຕ້ຢ່າງຮຸນແຮງເພື່ອປົກປ້ອງຕົນເອງ, ແຕ່ດ້ວຍປະຕິກິລິຍາທີ່ເປັນມິດຂອງພວກເຂົາ ສົງຄາມຈຶ່ງຫລີກລ້ຽງບໍ່ໄດ້



# ການຄືນດີກັນ

"ຊາວອິດສະຣາເອນໄດ້ຮັບຄວາມພໍໃຈ ແລະ ພາກັນສັນລະເສີນພຣະເຈົ້າ ພວກເຂົາບໍ່ໄດ້ເວົ້າເຖິງເລື່ອງອອກໄປເຮັດເສິກລ້າງແຜ່ນດິນ ບ່ອນທີ່ປະຊາຊົນຣູເບັນ ແລະ ກາດໄດ້ຕັ້ງຖິ່ນຖານຢູ່ນັ້ນອີກຕໍ່ໄປ"
(ຢຊ 22:33)



ເມື່ອເຫັນວ່າຂໍ້ກ່າວຫານັ້ນບໍ່ມີມູນຄວາມຈິງ, ຟີເນຮາ ແລະ ຊາວອິດສະຣາເອນຈຶ່ງຮູ້ສຶກໂລ່ງໃຈ (ຢຊ. 22:30-31). ສໍາລັບພວກເຂົາແລ້ວ, ເມື່ອອິດສະຣາເອນໄດ້ຮັບຮູ້ຄວາມຈິງ ພວກເຂົາກໍ່ດີໃຈ ແລະ ພາກັນສັນຣະເສີນພຣະເຈົ້າ (ຢຊ. 22:32-33).



ຜ່ານການເປັນແບບຢ່າງຂອງພວກເຂົາ, ພວກເຮົາສາມາດເຫັນຂັ້ນຕອນທີ່ຈໍາເປັນໃນການຟື້ນຟູສັນຕິພາບ ໃນສະຖານະການທີ່ຄ້າຍຄືກັນໄດ້ ເມື່ອເຫດການນັ້ນກ່ຽວຂ້ອງກັບຄອບຄົວ, ຄຣິດຕະຈັກ ແລະ ຊຸມຊົນ:

- ➡ ຊີ້ແຈງຄວາມຄິດຂອງພວກເຮົາອອກມາ
- ➡ ຢ່າຟ້າວດ່ວນສະຫລຸບ
- ➡ ໂອ້ລົມກ່ຽວກັບບັນຫາທີ່ເກີດຂຶ້ນ ກ່ອນການກະທໍາ
- ➡ ຍອມເສຍສະຫລະ ເພື່ອຄວາມສາມັກຄີ
- ➡ ຕອບໂຕ້ດ້ວຍຄວາມສຸພາບຕໍ່ຄວາມຂັດແຍ້ງ
- ➡ ຊື່ນຊົມຍິນດີຕໍ່ສັນຕິສຸກໃນພຣະເຈົ້າທີ່ໄດ້ຮັບການຟື້ນຟູ

"The children of Gad and Reuben now placed upon their altar an inscription pointing out the purpose for which it was erected; and they said, "It shall be a witness between us that Jehovah is God." Thus they endeavored to prevent future misapprehension and to remove what might be a cause of temptation.

How often serious difficulties arise from a simple misunderstanding, even among those who are actuated by the worthiest motives; and without the exercise of courtesy and forbearance, what serious and even fatal results may follow [...]

No one was ever reclaimed from a wrong position by censure and reproach; but many are thus driven further from the right path and led to harden their hearts against conviction. A spirit of kindness, a courteous, forbearing deportment may save the erring and hide a multitude of sins"

EGW (Patriarchs and Prophets, pp. 519)